LALCO
LAO ASEAN LEASING PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

ເລກທີ 9401
ນະຄອນຫລວງວຽງຈັນ , ວັນທີ 25 ມິຖຸນາ 2024

ຮຽນ: **ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ ທີ່ນັບຖື,**
ທ່ານຜູ້ອຳນວຍການໃຫຍ່ ຕະຫລາດຫລັກຊັບລາວ ທີ່ນັບຖື,
ທ່ານຜູ້ຖືຮຸ້ນຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: **ແຈ້ງມະຕິຂອງສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2024, ວັນທີ 25 ມິຖຸນາ 2024.**

- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ປະຈຳປີ 2024, ສະບັບເລກທີ 9101, ລົງວັນທີ 13 ມິຖຸນາ 2024;
- ອີງຕາມ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ປະຈຳປີ 2024, ລົງວັນທີ 20 ມິຖຸນາ 2024.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານໃຫ້ຊາບວ່າ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ບໍ່ສາມາດຈ່າຍເງິນປັນຜົນຈາກກຳໄລສະສົມໃນໄລຍະຜ່ານມາ ຮອດທ້າຍ ປີ ວັນທີ 31 ທັນວາ 2022 ໃນວັນທີ 24 ມິຖຸນາ 2024 ຕາມທີ່ໄດ້ເປີດເຜີຍໃນມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ຂອງ ບໍລິສັດ ລອຊ ປະຈຳປີ 2024, ລົງວັນທີ 20 ມິຖຸນາ 2024 ເນື່ອງຈາກ ບໍລິສັດ ກຳລັງຈັດຫາແຫຼ່ງທຶນທີ່ເປັນ ສະກຸນເງິນກີບ ເພື່ອມາຈ່າຍເງິນປັນຜົນ. ດັ່ງນັ້ນ, ບໍລິສັດ ລອຊ ຈຶ່ງຂໍເລື່ອນການຈ່າຍເງິນປັນຜົນຈາກວັນທີ 24 ມິຖຸນາ 2024 ມາເປັນວັນທີ 30 ສິງຫາ 2024 ແລະ ຜູ້ຖືຮຸ້ນທີ່ຢູ່ໃນລາຍຊື່ໃນປຶ້ມປິດປັນຊີຜູ້ຖືຮຸ້ນ ໃນວັນທີ 03 ພຶດສະພາ 2024 ແມ່ນຍັງມີສິດໄດ້ຮັບເງິນປັນຜົນດັ່ງກ່າວ.

ດັ່ງນັ້ນ, ຈຶ່ງໄດ້ຮຽນລາຍງານມາຍັງທ່ານເພື່ອຊາບ.

ດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

Mrs. Yuki Scott